ເພື່ອຮ່ວມສະເຫຼີມສະຫຼອງ ນະຄອນຫຼວງວຽງຈັນ ໔໕໐ ປີ

# ຈຳປາ

# ໃນດວງໃຈລາວ



ໂດຍ ດຣ. ອຸທະກີ ຈຸລາມະນີ ຄຳພຸຍ

ຂໍມອບໃຫ້ ທ. ດວງແຂ (ປຸ້ຍ)

ໄວ້ເປັນທີ່ລະນຶກ

ຈາກແມ່ ດວນ ປີ

(ດຣ. [illegible]

1/6/2010

*ເພື່ອຮ່ວມສະເຫຼີມສະຫຼອງ ນະຄອນຫຼວງວຽງຈັນ ໔໕໐ ປີ*

# ຈຳປາ

## ໃນດວງໃຈລາວ



ໂດຍ ດຣ. ອຸທະກີ ຈຸລາມະນີ ຄຳຜຸຍ

ຂໍອຸທິດປຶ້ມຫົວນີ້ ໃຫ້ແກ່ບັນພະບຸລຸດລາວ
ຜູ້ທີ່ຮູ້ເຫັນຄຸນຄ່າຂອງຄວາມງາມ
ອັນເລິກເຊິ່ງຂອງຈຳປາ
ແລະໄດ້ນຳເອົາຕົ້ນໄມ້ນີ້ມາປູກ
ຢູ່ໃນດິນແດນລ້ານຊ້າງ ແຕ່ຫຼາຍສັດຕະວັດຜ່ານມາ.



ພ້ອມນີ້ ກໍຂໍອຸທິດໃຫ້ແກ່ ຜູ້ໃຫ້ກຳເນີດເພງ:
"ຈຳປາເມືອງລາວ" ທັງສອງ ຄື:
ທ່ານ ພູມີ ຈິດຕະພົງ ແລະທ່ານ ອຸຕະມະ ຈຸລາມະນີ
ທີ່ໄດ້ເຮັດໃຫ້ດອກຈຳປາບານຢູ່ໃນຫົວໃຈຂອງຄົນລາວ
ຕະຫຼອດມາ ແລະຍືນຍົງຄົງຢູ່ຄູ່ຟ້າເມືອງລາວ
ຊົ່ວກາລະນານ.



*ສາລະບານ* *ໜ້າ*


ຄຳຂອບໃຈ 03
ຄຳນຳຈາກສຳນັກພິມ 04
ຄຳທັກທາຍຈາກຜູ້ຂຽນ 05
I.ຈຳປາ: ງາມ ແລະ ມີປະໂຫຍດ 07
1. ຈຳປາໃນໂລກພຶກສາຊາດ 13
2. ຊະນິດທີ່ພົບທົ່ວໄປໃນປະເທດລາວ 16
II. ຈຳປາ: ດອກໄມ້ປະຈຳຊາດລາວ 19
III. ຈຳປາ: ຢູ່ຄູ່ຟ້າຄູ່ແຜ່ນດິນລາວ 27
*1. ຈຳປາ: ບານທີ່ວັດພູຈຳປາສັກ* 29
*2. ຈຳປາ: ໃນສະໄໝພະເຈົ້າໄຊເຊດຖາ* 30
*3. ຈຳປາ: ໃນສະໄໝພະເຈົ້າສຸຣິຍະວົງສາ* 34
*4. ຈຳປາ: ໃນສະໄໝເປັນຫົວເມືອງຂຶ້ນຝຣັ່ງ* 38
*5. ຈຳປາ: ໃນສະໄໝຣາຊະອານາຈັກ* 39
*6. ຈຳປາ: ໃນສະໄໝ ສ.ປ.ປ.ລາວ* 40
*7. ເວົ້າສູ່ກັນຟັງ* 42
IV. ເພງຈຳປາເມືອງລາວ: ສາຍໄໝຜູກຮ້ອຍດວງໃຈຄົນລາວ 47
V. ຖິ່ນກຳເນີດຂອງຕົ້ນຈຳປາ 55
VI. ວົງການດອກຈຳປາໃນເວທີສາກົນ 61
VII. ວິທີປູກຕົ້ນຈຳປາ 67
VIII. ຢາມສວນ ຈຳປາມົງຄຸນ

ເອກະສານອ້າງອີງ 110

# ຄຳຂອບໃຈ

ຂ້າພະເຈົ້າບໍ່ແມ່ນນັກຂຽນມືອາຊີບ ແຕ່ປຶ້ມ "ຈຳປາໃນດວງໃຈລາວ" ຫົວນີ້ໄດ້ເລີ່ມຕົ້ນ ແລະສຳເລັດລົງຍ້ອນມີກຳລັງໃຈ ແລະການປະກອບສ່ວນຢ່າງຈິງຈັງ ຈາກຄອບຄົວ ພີ່ນ້ອງ ແລະໝູ່ເພື່ອນ ຊຶ່ງຂ້າພະເຈົ້າຂໍສະແດງຄວາມຂອບໃຈຢ່າງລົ້ນເຫຼືອມານະທີ່ນີ້ດ້ວຍ ເປັນຕົ້ນ: ອ້າຍ ລັດສະໝີ ຄຳຜຸຍ, ສາມີຜູ້ໄດ້ທຸ້ມເທເຫື່ອແຮງສ້າງສວນຈຳປາ ເຮັດໃຫ້ຄວາມຝັນຂອງຂ້າພະເຈົ້າກາຍເປັນຈິງ, ລູກທຸກຄົນທີ່ເອົາໃຈໃສ່ຊອກຫາແນວພັນໃໝ່ມາໃຫ້ຢູ່ຕະຫຼອດ ແລະຊ່ວຍໃນການບຳລຸງຮັກສາສວນ, ແມ່ນາຍ ວຽງໄຊ ຈຸລາມະນີ, ນາງ ສົມຝົນ ພັນແພງດີ, ນ້ອງສາວ, ທ້າວ ອານຸສອນ ຈັນທະລາຕີ, ນ້ອງຊາຍ, ປ້າມະນີສາຄອນ ບຸນຍະແສງ ແລະນ້າແສງມະນີ ສຸດທິພົງ, ພີ່ນ້ອງຜູ້ສະນັບສະໜູນການປູກດອກຈຳປາຢ່າງສຸດໃຈ. ມີສວນຈຳປາໃນມື້ນີ້, ຈຶ່ງມີປຶ້ມຫົວນີ້ ຢູ່ໃນຂອງມືທ່ານດຽວນີ້.

ຂ້າພະເຈົ້າບໍ່ສາມາດລືມ ທ່ານ ເຈມສ໌ ເມເຊີນ (James Mason) ນັກພຶກສາສາດ ແລະທ່ານ ຈິມ ລິດເຕີນ(Jim Lttle) ນັກຜະລິດດອກຈຳປາສາຍພັນໃໝ່ຜູ້ມີຊື່ສຽງຂອງໂລກ ທີ່ໃຫ້ໂອກາດຂ້າພະເຈົ້າໄດ້ຮູ້ຈັກກັບໂລກສວຍງາມແຫ່ງຈຳປາທີ່ຣາວາຍ, ດັ່ງນັ້ນ ຈຶ່ງຂໍຂອບໃຈນຳພວກເພິ່ນທັງສອງນະທີ່ນີ້ດ້ວຍ. ພ້ອມນີ້ ຂໍຂອບໃຈ ຢ່າງຈິງໃຈ ມາຍັງບັນດາທ່ານ ທີ່ປະກອບສ່ວນໃຫ້ຂໍ້ມູນຂ່າວສານ ເປັນຕົ້ນ ທ່ານ ທິມມະກອນ ມະໂນທຳ, ທ່ານຄຳຈັນ ໄຊມົງຄຸນ (ພະນັກງານທີ່ ວັດພູ ມໍລະດົກໂລກ), ທ່ານ ຄຳຕັນ ຈັນທະລາ, ທ່ານ ປຣະເສີດ ບັນຈົງພານິດ ແຫ່ງບໍລິສັດບລູກັ້ດສ໌, ແລະອີກຫຼາຍຄົນ ເຊິ່ງຊ່ວຍໃຫ້ປຶ້ມຫົວນີ້ມີພື້ນຖານທາງປະຫວັດສາດ ແລະເພີ່ມສີສັນດ້ວຍຮູບພາບທີ່ເປັນຫຼັກຖານ.

ດຣ. ອຸທະກີ ຈຸລາມະນີ ຄຳຜຸຍ

# ຄຳນຳ ສຳນັກພິມ

ຂໍໃຫ້ຈຳປາເບັ່ງບານ ໃນດວງໃຈລາວ ຕະຫລອດໄປ! ສຳນັກພິມດອກເກດ ມີຄວາມພາກພູມໃຈ ທີ່ໄດ້ເປັນຜູ້ຈັດພິມປຶ້ມຫົວນີ້ຂອງ ດຣ.ອຸທະກີ ຈຸລາມະນີ ຄຳຜຸຍ ຜູ້ຫຼົງຮັກດອກຈຳປາ ເຖິງຂັ້ນລົງທຶນລົງມືສຶກສາຄົ້ນຄວ້າຫາຂໍ້ມູນມາຂຽນ ພາຍຫຼັງທີ່ສວນຈຳປາມິງຄຸນໄດ້ອອກດອກສົ່ງກິ່ນຫອມກຸ້ມກົ້ວທົ່ວນະຄອນຫຼວງວຽງຈັນ.

ປຶ້ມຫົວນີ້ ເປັນໝາກຜົນທັງຈາກແຮງກາຍແຮງໃຈ ສະຕິປັນຍາ ຄວາມຮັກ ແລະຄວາມສາມັກຄີ ຂອງຜູ້ຄົນໃນຄອບຄົວ ຍາດພີ່ນ້ອງ, ເປັນດອກໄມ້ໃນອຸທະຍານອັກສອນ ຕື່ມສະຫງ່າລາສີໃຫ້ແກ່ການສະເຫຼີມສະຫຼອງວັນປະຫວັດສາດນຶ່ງຂອງຊາດ ນັ້ນຄື ຄົບຮອບ 450 ປີ ນະຄອນຫຼວງວຽງຈັນ.

ກວ່າປຶ້ມແຕ່ລະຫົວຈະອອກມາໄດ້ ເປັນຮູບເປັນຊົງສວຍງາມ ພ້ອມດ້ວຍຂໍ້ມູນ ວິທະຍາສາດ ຖືກຕ້ອງກວາມລວມຫຼາຍຂົງເຂດນັ້ນ ຜູ້ຂຽນຕ້ອງໄດ້ໃຊ້ຄວາມພະຍາຍາມອົດທົນແລະພາກ ພຽນພໍສົມຄວນ, ສິ່ງນີ້ ເຫັນໄດ້ຈາກຄຸນນະພາບແລະເນື້ອໃນໃຈຄວາມທີ່ລໍຄອຍໃຫ້ຜູ້ອ່ານ ພິສູດດ້ວຍຕົນເອງ.

ຢ່າງໃດກໍຕາມ ເນື່ອງຈາກເປັນປຶ້ມເຫຼັ້ມທຳອິດ ທີ່ເວົ້າເຖິງດອກໄມ້ປະເພດນີ້ ທີ່ມີຕັ້ງຫຼາຍຮ້ອຍ ຫຼາຍພັນແນວ ຈຶ່ງຄົງຍັງຕ້ອງມີຄຳຖາມຕິດຕາມມາຢ່າງແນ່ນອນເຊັ່ນວ່າ ຫຼັກການຕັ້ງຊື່ແຕ່ລະສາຍພັນ(ແນວ)ນັ້ນເດ້ ຄວນອີງໃສ່ພື້ນຖານ ອັນໃດ? ແມ່ນໃຜມີສິດແລະໜ້າທີ່ໃນການຕັ້ງຊື່? ຊື່ ຂອງແຕ່ລະຊະນິດສື່ບອກຫຍັງແດ່? ໆລໆ ຄົງເປັນເລື່ອງທີ່ໜ້າສຶກສາ ສົນທະນາກັນອີກດົນພໍສົມຄວນ.

ສຳນັກພິມດອກເກດຫວັງວ່າ ປຶ້ມຫົວນີ້ ຈະສ້າງແຮງຈູງໃຈໃຫ້ຄົນລາວອີກຫຼາຍໆຄົນລຸກຂຶ້ນມາ ເຮັດອັນໃດອັນນຶ່ງເພື່ອໃຫ້ຈຳປາບານອາດເອ້ປະດັບສວນ ແລະສົ່ງກິ່ນຫອມເຢັນຊື່ນ ຢູ່ໃນດວງໃຈຂອງຄົນລາວຕະຫຼອດໄປ.

*ນະຄອນຫຼວງວຽງຈັນ ພຶດສະພາ 2010*

*ດວງເດືອນ ບຸນຍາວົງ*

# ຄຳທັກທາຍ ຈາກຜູ້ຂຽນ

ສະບາຍ ທ່ານທີ່ຮັກແພງ!

ກ່ອນອື່ນຂ້າພະເຈົ້າຂໍຂອບໃຈນຳທ່ານຫຼາຍໆ ທີ່ຈັບປຶ້ມຫົວນີ້ຂຶ້ນມາອ່ານ. ປຶ້ມຫົວນີ້ໂຊກດີທີ່ໄດ້ມາຮ່ວມບັນນະໂລກ ທ່າມກາງບັນຍາກາດແຫ່ງການສະເຫຼີມສະຫຼອງນະຄອນວຽງຈັນຄົບຮອບ 450 ປີ!

ວຽງຈັນໄດ້ຜ່ານປະຫວັດສາດອັນລະອິດລະອຽວ ທີ່ໃນອະດີດເຄີຍມີທັງໄລຍະຮຸ່ງເຮືອງເຫຼືອງເຫຼື້ອມ ແລະມີທັງໄລຍະຖືກບຸກລຸກຮຸກຮານ ຈາກສັດຕູທີ່ໄດ້ເຜົາຜານປຸ້ນສະດົມ ເຮັດໃຫ້ບ້ານແຕກສະແຫຼກຂາດ, ຊາວວຽງຈັນໄດ້ພັດພາກຈາກບ້ານເກີດເມືອງນອນທີ່ແສນຮັກດ້ວຍນ້ຳຕາແລະສາຍເລືອດ. ຄວາມເຈັບປວດຢ່າງຂົມຂື່ນແມ່ນພັນລະນາບໍ່ສິ້ນສຸດໄດ້. ແຕ່ເຖິງຢ່າງໃດມາຮອດດຽວນີ້ ວຽງຈັນກໍຍັງຢູ່ຄູ່ຊາດລາວ ຢ່າງທະນົງກຽດ. ແລະເຖິງວ່າດິນແດນທີ່ເຄີຍເອີ້ນວ່າ "ອານາຈັກລາວລ້ານຊ້າງ" ຕາມເຂດແດນ ຄືດັ້ງເດີມນັ້ນ ບໍ່ມີອີກແລ້ວກໍຕາມ ແຕ່ຕົ້ນຈຳປາກໍຍັງມີຊີວິດຕິດພັນກັບຄົນລາວມາຕະຫຼອດ. ເຖິງວ່າເຂົາເຈົ້າຈະຕົກຢູ່ໃສກໍຕາມ ຊື່ "ຈຳປາຂາວ" ຫຼື "ຈຳປາລາວ" ກໍຍັງຄົງຮັກສາໄວ້ເຊັ່ນເດີມ. ສຳລັບຢູ່ໃນປະເທດລາວແລ້ວ ຕົ້ນຈຳປາຍັງຊູດອກສູ່ທ້ອງຟ້ານະຄອນຫຼວງວຽງຈັນ, ຈຳປາສັກ, ຫຼວງພະບາງ, ຫົວເມືອງອື່ນໆ ແລະເຂດຊົນນະບົດ ແຕ່ເໜືອເຖິງໃຕ້.

ເມື່ອກ່າວເຖິງ ເອກະລັກຂອງຄົນລາວ ເຄີຍມີຄຳເວົ້າວ່າ: "ຄົນລາວຢູ່ເຮືອນຮ້ານ, ກິນເຂົ້າໜຽວ, ເປົ່າແຄນ. ແຕ່ມາຮອດປະຈຸບັນ ຈະສາມາດຕໍ່ເຕີມຄຳເວົ້ານີ້ອີກໄດ້ບໍ່?: "ຄົນລາວ ຢູ່ເຮືອນຮ້ານ, ກິນເຂົ້າໜຽວ, ເປົ່າແຄນ ແລະມີດອກຈຳປາເປັນຂວັນໃຈ".

ປຶ້ມຫົວນີ້ ສະເໜີຂໍ້ມູນກ່ຽວກັບປະຫວັດຄວາມເປັນມາຂອງຕົ້ນຈຳປາໃນລາວ ທີ່ມີຄວາມສຳພັນກັບຄົນລາວ ແລະຊາດລາວນັບແຕ່ຊ້ານານມາແລ້ວ, ບົດບາດຂອງເພງຈຳປາເມືອງລາວຕໍ່ຈິດອາລົມຂອງຄົນລາວ. ບາງຂໍ້ມູນຂ່າວສານກ່ຽວກັບວົງການດອກຈຳປາໃນສາກົນ ວິທີການປູກແລະການຂະຫຍາຍ

24 / VII
ຫານຈຳໜ່າຍ

ພັນ. ຂ້າພະເຈົ້າຮູ້ດີວ່າ ຂໍ້ມູນຫຼັກຖານ ຍັງມີໜ້ອຍ ແຕ່ກໍໃຫ້ກຳລັງໃຈຕົນເອງວ່າ: "ເຮັດຂຶ້ນມາແບບບໍ່ຄົບຖ້ວນສົມບູນປານໃດ ໃນເວລານີ້ ກໍຍັງດີກວ່າບໍ່ມີເລີຍ".

ດັ່ງນັ້ນ ຂ້າພະເຈົ້າຈຶ່ງຢາກຂໍອະໄພໄວ້ລ່ວງໜ້າ ສຳລັບຄວາມຂາດຕົກບົກພ່ອງ ທີ່ອາດມີໄດ້ໃນຄວາມພະຍາຍາມຄັ້ງນີ້ດ້ວຍ. ພ້ອມນີ້ ກໍຂໍຝາກຄວາມຂອບໃຈຢ່າງຈິງໃຈໄວ້ລ່ວງໜ້າ ມາຍັງທ່ານທີ່ກະລຸນາໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບດອກຈຳປາກັບຄົນລາວ ເພື່ອຮັກສາໄວ້ເປັນລາຍລັກອັກສອນ ໄວ້ແກ່ຄົນຮຸ່ນຫຼັງຂອງພວກເຮົາຕໍ່ໄປ.

ຄິດວ່າເຖິງຢ່າງໃດ ໃນປຶ້ມຫົວນີ້ ທ່ານກໍຈະໄດ້ເພີດເພີນກັບ ຄວາມງາມຫຼາກຫຼາຍ ຂອງດອກຈຳປາຊຶ່ງຖ່າຍພາບຈາກສວນຂອງພວກເຮົາເອງ. ຂໍອວຍພອນໃຫ້ທ່ານຈົ່ງປະສົບແຕ່ຄວາມສຸກຄວາມສົມຫວັງ ແລະມີຈິດໃຈສົດຊື່ນເບີກບານ ເໝືອນດັ່ງຈຳປາບານໃນຍາມເດືອນຫ້ານັ້ນເຖີດ !



# I

# ຈຳປາງາມ ແລະ ມີປະໂຫຍດ





ຈຳປາເປັນດອກໄມ້ໂບຮານ ທີ່ຕິດພັນກັບຄວາມເຊື່ອຂອງມະນຸດ ແລະ ຕຳນານຫຼາຍໆເລື່ອງທີ່ເລົ່າຂານກັນມາໃນແຕ່ລະປະເທດ ຊຶ່ງມີທັງເລື່ອງມ່ວນຫູ ຊື່ນໃຈ ແລະກົງກັນຂ້າມ. ການຕັ້ງຊື່ດອກໄມ້ຊະນິດນີ້ ກໍຄືກັນ ແມ່ນເປັນໄປຕາມ ຈິນຕະນາການຂອງຄົນໃນຊາດນັ້ນ. ແຕ່ເຖິງຢ່າງໃດກໍຕາມ ຕົກມາຮອດປັດຈຸ ບັນນີ້ ເປັນທີ່ແນ່ນອນວ່າ ຈຳປາໄດ້ກາຍເປັນດອກໄມ້ຍອດນິຍົມ ຊະນິດນຶ່ງຂອງ ຄົນທີ່ຮັກທຳມະຊາດ ແລະມີອາລົມອ່ອນໄຫວຕໍ່ຄວາມງາມຂອງພືດສະກຸນນີ້ ໄປແລ້ວ.

ຕົ້ນຈຳປາ ມີຢູ່ຫຼາຍປະເທດໃນໂລກ ໂດຍສະເພາະແມ່ນປະເທດໃນ ເຂດອາກາດຮ້ອນ ແລະລຸ່ມເຂດຮ້ອນ. ຍ້ອນຄວາມງາມຂອງດອກໄມ້ນີ້ ຊາວ ໂລກໄດ້ຂະໜານນາມຕ່າງໆນາໆໃຫ້ວ່າ:

• "ດອກຈຳປາ ເປັນຣາຊິນີ ແຫ່ງດອກໄມ້ເມືອງຮ້ອນ."

• "ດອກຈຳປາແມ່ນຄວາມສວຍງາມທຳມະຊາດທີ່ແມ່ທໍລະນີໄດ້ປະທານໃຫ້ແກ່ ມວນມະນຸດ ໄວ້ເປັນຂອງຂວັນທີ່ແສນປະເສີດ ແລະຄວນຖະໜອມໄວ້ຄູ່ໂລກ ຈົນຊົ່ວກາລະນານ."

• ໃນຍຸກພັດທະນາ ທີ່ຊີວິດມີຄວາມເຄັ່ງຮ້ອນຫຼາຍຂຶ້ນຄືທຸກມື້ນີ້ ດອກຈຳປາກາຍ ເປັນຢາວິເສດ ຊ່ວຍຜ່ອນຄາຍຄວາມເຄັ່ງຕຶງທັງຈິດໃຈ ແລະຮ່າງກາຍໄດ້ເປັນ ຢ່າງດີ ດັ່ງນັ້ນ ຈຶ່ງຖືວ່າ "ຈຳປາເປັນຕົ້ນໄມ້ມະໂຫສົດ ແລະສິຣິມົງຄຸນ ຢ່າງ ແທ້ຈິງ".

ນອກຈາກງາມແລະຫອມແລ້ວ ຈຳປາຍັງເປັນພືດຢາ(ສະໝູນໄພ) ທີ່ສາ ມາດໃຊ້ເຂົ້າໃນການປິ່ນປົວອາການພະຍາດຕ່າງໆ. ດັ່ງນັ້ນ ນັກຄົ້ນຄວ້າທາງ ດ້ານການຢາ (ເພສັດຊະກອນ), ດ້ານສຸຂະພາບແລະເສດຖະກິດ ຈຶ່ງຂະໜານ ນາມໃຫ້ວ່າ:

• ຈຳປາ ແມ່ນຕົ້ນໄມ້ ມະໂຫສົດອັດສະຈັນ!

• ຈຳປາ ແມ່ນຕົ້ນໄມ້ທີ່ມີອະນາຄົດແຈ່ມໃສ!

ພິເສດ ສຳລັບຊາວພຸດໂດຍທົ່ວໄປ, ດອກຈຳປາແມ່ນສັນຍະລັກຂອງ



ຄວາມອຳມະຕະ ແລະນິລັນດອນ (Immortality and Eternity) ດັ່ງນັ້ນ ຈຶ່ງປູກຢູ່ໃນວັດ.

ຊາວລາວມີຄວາມນິຍົມຊົມຊື່ນແລະຜູກພັນກັບດອກຈຳປາເປັນພິເສດ ຈົນຍົກໃຫ້ເປັນດອກໄມ້ປະຈຳຊາດແຕ່ດົນນານແລ້ວ.

ຈຳປາ ແມ່ນດອກໄມ້ງາມເດັ່ນ ເຢັນຕາ ຈາກທຳມະຊາດ ທີ່ມີສະເພາະສະເພາະຕົວ ຄືມີສີສັນຫຼາກຫຼາຍ ແລະກິ່ນຫອມອ່ອນ ແຕ່ແຝງພະລັງດຶງດູດເໝືອນກັບວ່າ ມີວິນຍານກັ່ງວກ່ອມເອົາກະແສຈິດ ຂອງຜູ້ຄົນໃຫ້ມາສົນໃຈ ຜູກພັນຮັກໄຄ່. ກີບດອກຈັດວາງແບບງ່າຍດາຍ ແຕ່ຫາກສະຫງ່າງາມ ໜ້າແພງແຍງບໍ່ອີ່ມ, ກິ່ນກໍຫອມຊວນດົມ ຊົມແລ້ວໝາຍປອງຢາກເປັນເຈົ້າຂອງ. ຖ້າເບິ່ງຄັກໆແຕ່ລະດອກຈະເຫັນລາຍເສັ້ນ ທີ່ນາງແມ່ທໍລະນີໄດ້ຂີດແຕ້ມຢ່າງປານີດລະອຽດອ່ອນ. ບາງພ່ອງກໍທາສີຄືໃຊ້ຟອຍແຕ້ມລູບໄລ້ເປັນສີຈາງຈືດ ແຕ່ຫາກອາດຕາ. ບາງພ່ອງກໍແຕ້ມຕື່ມ ດ້ວຍອາລົມເຂັ້ມ ເປັນສີແດງຈັດ ຫຼືແສດສົ້ມສີຮຸ່ງແຈ້ງ ແຕ່ງາມຫຼາຍ.

ເບິ່ງແຕ່ ລຳຕົ້ນ ງ່າ ໃບ ກໍຍັງງາມໜ້າເບິ່ງ ຍ້ອນຮູບຊົງອ່ອນຊ້ອຍ ມີສິນລະປະໃນຕົວແບບນຶ່ງ: ໃບໃຫຍ່ ຂຽວເຂັ້ມ ບາງຊະນິດ ເຫຼື້ອມເປັນເງົາງາມ.
ຈຳປາມີກິ່ນຫອມຫຼາກຫຼາຍ ແຕ່ທຸກກິ່ນຫອມເຢັນຊື່ນໃຈ ມີອຳນາດປຸກຄວາມນຶກຄິດຈາກໃຕ້ຈິດສຳນຶກ ໃຫ້ອອກມາເປັນຄຳພັນລະນາ ວາທະສິນ ແລະກາບກອນ ປຸກອາລົມອອນຊອນ ແຕ່ງເປັນເນື້ອເພງ ບັນເລງເປັນສຽງດົນຕີ ວາດສີແຕ້ມເປັນຮູບທີ່ບັນຈົງ ປັ້ນຊົງປະດິດປະດອຍເປັນສິນລະປະຫຼາກຫຼາຍແນວ.

ສິ່ງທີ່ປະທັບໃຈຫຼາຍ ອີກອັນນຶ່ງຂອງດອກຈຳປາ ແມ່ນພະລັງທີ່ສາມາດກ່ອມອາລົມຂອງຄົນເຮົາຢ່າງ ເລິກເຊິ່ງເຖິງໃຈ ຈົນເຮັດໃຫ້ເກີດຄວາມສະຫງົບໃນຈິດໃຈ ຫາຍຈາກຄວາມເຫງົາ ຫວ່າງຈາກຄວາມໂສກເສົ້າ ກາຍມາເປັນຄວາມເພີດເພີນຊື່ນໃຈທີ່ຫາໄດ້ຍາກ.

ເວົ້າແທ້ ຄວາມມີມົນສະເໜຂອງຈຳປານັ້ນ ບໍ່ຊ່າງຈະພັນລະນາໃຫ້ສົມໃຈດອກ ພຽງແຕ່ຮູ້ວ່າ ເມື່ອຜູ້ໃດພົບເຫັນຕົ້ນຈຳປາ ທີ່ພວມມີດອກບານເຕັມຕົ້ນ ບໍ່ວ່າຈະແມ່ນສາຍພັນຫຍັງ ສີຫຍັງກໍຕາມ ຜູ້ນັ້ນກໍຈະບໍ່ສາມາດຢ່າງ

ກາຍເສີຍໄດ້ ໂດຍສະເພາະຄົນທີ່ມີສິນລະປະໃນຫົວໃຈ ແລະອາລົມອ່ອນໄຫວ. ບໍ່ມີໃຜດອກທີ່ຈະ ບໍ່ຈ້ອງສາຍຕາເບິ່ງພົ້ວດອກບານ ທີ່ບາງເທື່ອຕັ້ງຊີ້ຊູຟ້າຢ່າງສະຫງ່າອົງອາດ ທ້າທາຍສາຍລົມແສງແດດ ຫຼື ບາງເທື່ອຊ່ຳກ້ານກ່ອງພົ້ວຍ້ອຍລົງມາຢ່າງອ່ອນຊ້ອຍແບບຖະໜອມຖ່ອມຕົວ. ຍ່າງກາຍແລ້ວ ຍັງງວກ ຄືນຫຼັງແນມເບິ່ງອີກຈົນສຸດສາຍຕາ ບາງເທື່ອກໍກັບຄືນມາຈັບໂຈມ ສູດດົມໃຫ້ລົມຫາຍໃຈ ໄດ້ສຳພັດດົມກິ່ນຫອມຫວນ.

ຈິດຕະກອນຫຼາຍຄົນຫຼົງໄຫຼນຳຈຳປາຍ້ອນຮູບຊົງຂອງຕົ້ນ, ກິ່ງງ່າ, ໃບ, ສີສັນ ແລະເສັ້ນສີ ເປັນລວດລາຍ ທີ່ອາດແຕ້ມເທິງກີບດອກ ຊຶ່ງຕື່ມຄວາມຫຼາກຫຼາຍທີ່ວ່ານັ້ນ. ນອກນັ້ນ ກີບດອກອັນອ່ອນນວນຂອງຈຳປາ ຍັງປ່ຽນສີສັນໄປຕາມລະດູການອີກດ້ວຍ. ດັ່ງນັ້ນ ຖ້າມີໂອກາດໄດ້ສັງຊອມຕິດຕາມຢ່າງໃກ້ຊິດກໍຈະຕື່ນເຕັ້ນນຳສະເໜ່ອັນລຶກລັບປະທັບໃຈນີ້ຕື່ມຂຶ້ນ. ນັກຈິດຕະວິທະຍາ ໄດ້ອະທິບາຍ ດ້ວຍການວິເຄາະທາງວິທະຍາສາດວ່າ: ກິ່ນດອກຈຳປາປະກອບດ້ວຍສານລະເຫີຍພິເສດອັນນຶ່ງ ທີ່ສາມາດກະຕຸກສູນກາງສະໝອງ ໃຫ້ສົ່ງສັນຍານ ທີ່ກໍ່ໃຫ້ເກີດຄວາມພໍໃຈ, ອາລົມເບີກບານ ແລະຟື້ນຟູຄວາມຊົງຈຳທີ່ຝັງຊ້ອນຢູ່ໃນສ່ວນເລິກຂອງຫົວໃຈ. ດັ່ງນັ້ນ ບໍ່ແມ່ນເລື່ອງບັງເອີນທີ່ວ່າ ຫຼາຍໆຄົນເມື່ອມີໂອກາດໄດ້ເຂົ້າໄປໃນສວນຈຳປານາໆພັນ ໄດ້ຊື່ນຊົມນຳສີສັນ ຫຼາກຕາ ແລະໄດ້ສູບດົມກິ່ນຫອມອ່ອນຫວານອັນຫຼາກຫຼາຍນັ້ນແລ້ວ ກໍຈະອຸທານອອກມາຢ່າງບໍ່ໄດ້ຕັ້ງໃຈວ່າ: “ໂອຍ ງາມຫຼາຍ! ຈັ່ງແມ່ນ ອີ່ມຕາ ອີ່ມໃຈເດ !” ເວົ້າແທ້ເນື້ອຄວາມທັງໝົດຂອງເພງຈຳປາເມືອງລາວ ກໍໄດ້ບັນລະຍາຍຢ່າງຄົບຖ້ວນ ແລະສະທ້ອນຄວາມຮູ້ສຶກຂອງຄົນລາວ ອອກມາຢ່າງດີເລີດແລ້ວ ເມື່ອໄດ້ສຳພັດກັບກິ່ນຫອມຂອງດອກຈຳປາ (ເມື່ອດົມກິ່ນເຈົ້າປານພົບຊູ້ເກົ່າທີ່ພັດພາກຈາກໄປ). ບໍ່ເປັນເລື່ອງບັງເອີນ ທີ່ພວກເຈົ້າຂອງຮ້ານຮົມຢາ ຫຼື ສະປາ (Spa) ພາກັນປູກຕົ້ນຈຳປາເອ້ສວນ ແລະໃຊ້ດອກດວງເອ້ຫ້ອງ ລອຍໃສ່ນ້ຳອາບ ຫຼືສະນ້ຳ ແລະບາງຮ້ານເຖິງຂັ້ນໃຊ້ນ້ຳມັນຫອມຈາກດອກຈຳປາ ມາຖູທາບຳລຸງຖະໜອມຜິວ ແລະອື່ນໆ ເພື່ອໃຫ້ລູກຄ້າ ໄດ້ຫຼຸດຜ່ອນຄວາມຕຶງຄຽດ ທາງດ້ານອາລົມ ແລະຮ່າງກາຍລົງໄດ້ຢ່າງຄຸ້ມຄ່າ ໃນເວລາເຂົ້າໄປໃຊ້ບໍລິການໃນສະຖານທີ່ນັ້ນ.

# 1. ຈຳປາໃນໂລກພຶກສາຊາດ

ຕົ້ນຈຳປາ ມີ ຊື່ ວິທະຍາສາດວ່າ: Plumeria ຫຼື Frangipani. ການຈັດແບ່ງຕາມລຳດັບ ທາງວິທະຍາສາດ[1] ມີດັ່ງລຸ່ມນີ້:

- ຈຳປາ ຈັດຢູ່ໃນຄອບຄົວ ຫຼື ຕະກຸນ (Family): ອາໂປຊີນາເຊ (Apocynaceae).
- ສະກຸນ (Genus): ຈຳປາ (Plumeria)
- ຊຶ່ງແຍກອອກເປັນ 12 ຊະນິດ (Species) ຄື:

| | |
|---|---|
| **1. Plumeria alba** | **8. Plumeria obtusa** |
| **2. Plumeria bahamensis** | **9. Plumeria pudica** |
| **3. Plumeria bracteata** | **10. Plumeria rubra** |
| **4. Plumeria caracassa** | **(aka Pl. acuminate and acutifolia)** |
| **5. Plumeria cubensis** | **11. Plumeria stenopetala** |
| **6. Plumeria jamaicensis** | **12. Plumeria tuberculata** |
| **7. Plumeria montana** | |

- ແຕ່ລະຊະນິດ ແຕກອອກເປັນຫຼາຍ ສາຍພັນ (Varieties) ໂດຍຈຳແນກ ຈາກລັກສະນະຮູບຊົງ ຂອງຕົ້ນ ດອກ ວາດການຂະຫຍາຍຕົວ ກັບ ດີເອັນເອ (DNA).

ລັກສະນະລວມ ຈຳປາ ເປັນຕົ້ນໄມ້ທີ່ແຜ່ຫຼາຍໃນເຂດຮ້ອນ, ສ່ວນຫຼາຍ ຕົ້ນສູງສຸດ ປະມານ 5-8 ແມັດ. ສຳລັບຊະນິດເຕ້ຍ ຄວາມສູງສຸດມີພຽງແຕ່ 2 ແມັດ. ແຕ່ລະງ່າ ແຕກກິ່ງອອກ ຄື ເຂົາກວາງ, ມີນ້ຳຢາງສີຂາວຄືນ້ຳນົມ. ໃບສີຂຽວຈັດວາງເປັນຈຸ້ມ. ສ່ວນຫຼາຍໃບຍາວໃຫຍ່ທາງປາຍ ສ້ວຍແຫຼມ ຫຼື ມົນແລ້ວແຕ່ຊະນິດ.

[1] http://en.wikipedia.org/wiki/Plumeria







**ດອກຈຳປາ** ຢູ່ຈຸ້ມກັນເປັນພົ້ວ, ພົ້ວນຶ່ງໆຈະໃຫ້ດອກນັບແຕ່ 50 ດອກ ເຖິງ 300 ກວ່າດອກ ຊຶ່ງບານຕິດຕໍ່ກັນຫຼາຍວັນແລະຫຼາຍເດືອນ. ຈຳນວນດອກຈະຂຶ້ນກັບສາຍພັນ ແລະການບຳລຸງຮັກສາໃຫ້ຕົ້ນແຂງແຮງສົມບູນດີ. ດອກນຶ່ງມີຫ້າກີບຮູບກີບດອກເປັນຮູບໄຂ່ຮູບໝາກປີຮູບກົ່ງມົນຈັດວາງລຽນກັນຫຼືເລື່ອມກັນ. ສ່ວນສີເປັນຕົ້ນຕໍແມ່ນ ເຊັ່ນ: ຂາວ, ເຫຼືອງ, ແດງ, ບົວ, ມ່ວງ ແຕ່ລະສາຍພັນມີສີສະເພາະຂອງຕົນອີກ ຍ້ອນວ່າສີພື້ນຖານນັ້ນ ຈະອົມກັບສີອື່ນອີກ. ບາງສາຍພັນ ຍັງມີລາຍເສັ້ນສີຕ່າງໆແຕ້ມຢູ່ເທິງສີພື້ນຖານອີກ. ດອກແລະລາຍ ມີຄວາມເຂັ້ມຕ່າງກັນ ແລະບາງເທື່ອກໍມີການແຕ້ມຄືນ້ຳສີຮວາດໄປ ຈຶ່ງສ້າງຄວາມຫຼາກຫຼາຍ ໄປຕາມສາຍພັນ.

**ຕົ້ນຈຳປາ** ມີຈຸດພິເສດຄື ມີໄລຍະ "ພັກຜ່ອນ" ຫຼື "ນອນ" ທີ່ເຫັນໄດ້ຢ່າງປະຈັກຕາ. ໄລຍະນັ້ນ ໃບຈະຫຼົ່ນໝົດຕົ້ນ ຍັງແຕ່ງ່າຫຼ້ອນ ບໍ່ມີໃບ, ບໍ່ມີດອກ ຫຼື ໃບໜ້ອຍ ແລະດອກໜ້ອຍທີ່ສຸດ. ໃນຕົວຈິງແມ່ນ ກິນອາຫານໜ້ອຍ ແລະຕົ້ນກໍບໍ່ຂະຫຍາຍຕົວ. ປະກົດການອັນນີ້ ແມ່ນເກີດໃນຍາມອາກາດໜາວ. ຕົ້ນຈຳປາຈະລໍຖ້າຈົນເຖິງອາກາດອຸ່ນຂຶ້ນ ແລະຮ້ອນສົມຄວນ (28–32 ອົງສາ) ຈຶ່ງຟື້ນຕົວ ແລະອອກໃບອອກດອກບານຮຸ່ງເຕັມຕົ້ນ ງາມສົດຊື່ນຄືນໃໝ່. ໝາຍຄວາມວ່າຕົ້ນຈຳປາ ໃຫ້ດອກເຖິງ 8 ເດືອນ ຫາ 10 ເດືອນຕໍ່ປີ ຊຶ່ງບໍ່ມີຕົ້ນດອກໄມ້ຊະນິດໃດ ທີ່ຈະໃຫ້ດອກຫຼາຍແລະດົນປານນີ້.

**ກິ່ນຈຳປາ** ແຕກຕ່າງກັບດອກໄມ້ຊະນິດອື່ນຢູ່ບ່ອນວ່າ ແຕ່ລະສາຍພັນຈະມີກິ່ນຫອມຕ່າງກັນ. ເມື່ອດົມກິ່ນເຫຼົ່ານັ້ນ ສາມາດທຽບກັບກິ່ນ ຕ່າງໆເຊັ່ນ: ກິ່ນດອກໄມ້ (ດອກຊ້ອນ, ດອກແກ້ວ, ດອກກະດັງງາ, ດອກອິນທະຫວາ, ດອກກຸຫຼາບ, ດອກຈຳປີ), ກິ່ນໝາກໄມ້ (ໝາກຄາຍສຸກ, ໝາກມ່ວງສຸກ, ໝາກນາວ) ແລະກິ່ນຕົ້ນໄມ້ ແລະພືດພັນຕ່າງໆ ເຊັ່ນ: ກະທິໝາກພ້າວຊ້ຽວ, ຈັນຫອມ, ນວດຂີ້ເຜີ້ງ, ຫົວສີໃຄ ແລະອື່ນໆ... ສ່ວນຫຼາຍກິ່ນເຫຼົ່ານັ້ນຍັງປະສົມກັນແບບພໍດີເໝາະ ຊຶ່ງຜົນອອກມາແມ່ນ "ຫອມມ່ວນດັງ ອອນຊອນໃຈ". ຄວາມແຕກຕ່າງຫຼາກຫຼາຍນັ້ນ ຍັງຢູ່ທີ່ລະດັບ ຄວາມຫອມ ຄື: ຫອມອ່ອນ ຫອມປານກາງ ແລະຫອມຫຼາຍ.

## 2. ຊະນິດທີ່ພົບທົ່ວໄປໃນປະເທດລາວ






ໃນປະເທດລາວ ຈຳປາທີ່ພົບເຫັນຫຼາຍກວ່າໝູ່ແມ່ນ ຊະນິດ Plumeria acutifolia (rubra) ມີຢູ່ 4 ສາຍພັນຕົ້ນຕໍ.

1. ສາຍພັນ ທີ່ຄົນລາວເອີ້ນຊື່ວ່າ:"ຈຳປາຂາວ ຫຼື ຈຳປາລາວ" ແມ່ນສາຍພັນດັ້ງເດີມ ທີ່ຢູ່ໃນປະເທດເຮົາມາໄດ້ຫຼາຍສັດຕະວັດມາແລ້ວ ຈົນກາຍເປັນສາຍພັນພື້ນເມືອງຂອງລາວ. ກີບດອກເປັນສີຂາວ ໃຈເຫຼືອງຂຶ້ນເມືອຮອດກາງກີບ ເບື້ອງນອກເປັນສີຂາວນວນ ຂອບດ້ວຍເສັ້ນສີບົວຈາງ ກິ່ນຫອມອ່ອນແຕ່ກຸ້ມກ່ອມໄປໄກ.

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ